ການຜະລິດລະດູແລ້ງ ເມືອງທ່າປາງທອງ ພວມມີທ່າຂະຫຍາຍຕົວ
ຕາມການລາຍງານໜ່ວຍງານປູກຝັງຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງທ່າປາງທອງ
ແຂວງສະຫວັນນະເຂດໄດ້ໃຫ້ຮູ້ວ່າ:
ເມືອງທ່າປາງທອງໄດ້ຫັນເອົາພະນັກງານວິຊາການລົງປະສານສົມທົບກັບອຳນາດການປົກຄອງບ້ານ
ແລະປະຊາຊົນໃນເຂດທີ່ມີເງື່ອນໄຂທຳການຜະລິດ ເພື່ອເກັບກຳຂໍ້ມູນໃນການຜະລິດລະດູແລ້ງ
ແລະປູກເຂົ້ານາແຊງ ໃນສົກປີນີ້
ຊຶ່ງຕາມແຜນການເມືອງທ່າປາງທອງມີແຜນການຈະຜະລິດລະດູແລ້ງໃຫ້ໄດ້ໃນເນື້ອ ທີ່ 700
ເຮັກຕາ,

ໃນນັ້ນເນື້ອທີ່ປູກ ເຂົ້ານາແຊງມີ 500 ເຮັກຕາ, ມາຮອດປະຈຸບັນແມ່ນສາມາດປັກ ດຳໄດ້ແລ້ວ
100%, ຄາດວ່າຈະສາມາດເກັບກ່ຽວໃນລະຫວ່າງ ຕົ້ນເດືອນເມສາ 2016 ນີ້
ສ່ວນແນວພັນທີ່ຊາວກະສິກອນນຳໃຊ້ແນວພັນເຂົ້າໂພນງາມ
ແລະແນວພັນເຂົ້າປັບປຸງເພື່ອຍົກລະດັບສະມັດຖະພາບຜົນຜະລິດໃຫ້ໄດ້ຕາມ ຄາດໝາຍຄື 4
ໂຕນຕໍ່ເຮັກຕາ. ໃນທົ່ວເມືອງມີຊົນລະ ປະທານ 1 ແຫ່ງ, ເປັນຊົນລະປະທານແບບນ້ຳໄຫຼເຂົ້າເອງ
ສາມາດຫົດເນື້ອ ທີ່ທຳການຜະລິດລະດູແລ້ງໄດ້ ເຖິງ 2.000 ເຮັກຕາ ນອກຈາກ
ປູກເຂົ້ານາແຊງແລ້ວຊາວກະສິກອນພາຍໃນເມືອງທ່າປາງທອງ ຍັງໄດ້ສຸມໃສ່ປູກພືດຜັກຕ່າງໆ
ເພື່ອສົ່ງຂາຍໃຫ້ກັບຕະຫຼາດເຊັ່ນ: ໝາກແຕງ, ພືດຕະກຸນຖົ່ວ
ແລະພືດຜັກອື່ນໆຕື່ມອີກໃນເນື້ອທີ່ 200 ເຮັກຕາ.

ທີ່ມາຂອງຂ່າວ
 1 / 1